## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 23 ກໍຣະກົດ 2006 (7-23-2006)

---

## <u>ຂ້າພະເຈົ້າຈະສືບຕໍ່ຈົງຮັກພັກດີຕໍ່ພຣະເຈົ້າ</u>

<u>**ຂໍ້ພຣະຄັມພີໃນບົດຮຽນ:**</u> ອົບພະຍົບ 15:22-26; 16:2-4,31-35

<u>**ພຣະຄັມພີແຫ່ງຄວາມຈິງ:**</u> ພຣະເຈົ້າທົດສອບພວກທີ່ເປັນຂອງພຣະອົງເພື່ອໃຫ້ເຫັນເຖິງການສັດຊື່ແລະເສີມພະລັງຄວາມເຊື່ອຂອງພວກເຂົາ.

<u>**ຜົນສະທ້ອນຕໍ່ຊີວິດ:**</u> ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍທ່ານໃນການສະແດງອອກໃຫ້ເຫັນການເພິ່ງພາອາສັຍພຣະເຈົ້າໂດຍ:

- ການໄຈ້ແຍກຕໍ່ການຕອບຮັບທີ່ດີແລະບໍ່ດີຂອງການທົດສອບຄວາມເຊື່ອຂອງພວກທີ່ເຊື່ອ; ແລະ
- ການຕັດສິນໃຈຂອງທ່ານໃນທາງທີ່ຈະສະແດງອອກໃຫ້ເຫັນເຖິງການເພິ່ງອາສັຍຈາກການຊົງປະທານໃຫ້ຂອງພຣະເຈົ້າ.

### <u>ເປັນຫຍັງພຣະເຈົ້າຈຶ່ງທົດລອງໃຈເບິ່ງພວກທີ່ເປັນຂອງພຣະອົງ?</u>

ແອຣິກແລະຟີລິບ(ນີ້ບໍ່ແມ່ນຊື່ແທ້ຂອງພວກເຂົາ) ໄດ້ພາກັນຮຽນຈົບຈາກສະຖາບັນພຣະຄຣິສຕະທັມຄັມພີຂອງນິກາຍແບັບຕິສໃນເກືອບເວລາດຽວກັນ. ໄດ້ດົນສົມຄວນແລ້ວທີ່ແອຣິກໄດ້ມີຄວາມຮູ້ສຶກວ່າພຣະເຈົ້າໄດ້ຮ້ອງຕົນໃຫ້ອອກໄປປະກາດຂ່າວປະເສີດເຖິງແມ່ນວ່າລາວໄດ້ຮູ້ແລ້ວວ່າຕ້ອງຈາກຄວາມອົບອຸ່ນຫລາຍຢ່າງຂອງເຮືອນທີ່ເຄີຍຢູ່ແລະການຢູ່ໃກ້ຊິດຂອງຄອບຄົວແລະຫມູ່ຄູ່. ລາວພ້ອມດ້ວຍພັລຍາກໍກໍາລັງຕຽມຕ້ອນຮັບລູກກົກໃນຂນະທີ່ຍັງຝຶກຮຽນພາສາທີ່ປະເທດຄອສຕາຣິກາ.

ໃນດ້ານນຶ່ງອີກ, ຟີລິບ, ໄດ້ມີຄວາມມຸ້ງຫມາຍຢາກຈະເປັນສິດຍາພິບານປະຈໍາຢູ່ໂບດໃຫຍ່ທີ່ເຕັມດ້ວຍອິດທິພົນແຫ່ງໃດແຫ່ງນຶ່ງ. ຈາກການຖວາຍຊັບຊິ້ນໃຫຍ່ຂອງພໍ່ລາວຈຶ່ງກະທໍາໃຫ້ລາວໄດ້ຈົບປະຣິນຍາເອກ(ດ໊ອກເຕີ) ຈາກສະຖາບັນທີ່ບໍ່ໄດ້ແຕ່ງຕັ້ງຈາກທາງການຢູ່ທີ່ຣັດແຄລີຟໍເນັຽຊຶ່ງມັນກໍຊ່ອຍໃຫ້ລາວເປັນຜູ່ຊ່ຽວຊານແລະໄດ້ປະຣິນຍາໃນດ້ານທີສດີ. " ພຣະເຈົ້າສະຖິດຢູ່ທຸກຫົນທຸກແຫ່ງ, ຖ້າເຊັ່ນນັ້ນເປັນຫຍັງຈຶ່ງບໍ່ໄປຫາບ່ອນທີ່ມີເງິນ? ນັ້ນຄືຄະຕິທີ່ຟີລິບໄດ້ນໍາມາໃຊ້ເປັນຫລັກ.

ເປັນເວລາຫລາຍປີ, ແອຣິກພ້ອມພັລຍາໄດ້ຮັບໃຊ້ພຣະເຈົ້າຢ່າງສັດຊື່ໃນແຖບອະເມຣິກາໃຕ້. ພວກລູກໆຂອງເຂົາເຈົ້າກໍຮັກຊີວິດຂອງພວກເຂົາ, ພວກເຂົາກໍເປັນຜູ້ປະກາດຂ່າວປະເສີດເຊັ່ນກັນ. ຜູ້ປະກາດຂ່າວປະເສີດ, ສໍາລັບຄອບຄົວນີ້ພວກເຂົາຕ້ອງໄດ້ "ເດີນທາງໃນລະຍະອັນຍາວໄກ." ພວກເຂົາບໍ່ເຄີຍມີການກິນແຫນງແມ້ແຕ່ນາທີດຽວໃນການອອກໄປປະກາດຂ່າວປະເສີດ. ຄໍາພະຍານຂອງພວກເຂົາກໍແມ່ນວ່າພຣະເຈົ້າຊົງເປັນຜູ້ປະທານໃຫ້ທຸກໆຢ່າງທີ່ຕ້ອງການສເມີ.

ຊີວິດຂອງຟີລິບກໍບໍ່ຄ່ອຍມີຄວາມສຸກເທົ່າໃດ. ໃນລະຫວ່າງຂັ້ນຕອນຂອງການທົດລອງຢາກຈະສ້າງໂບດໃຫ້ໃຫຍ່ຂຶ້ນນັ້ນ, ລາວກໍພົບວ່າຕົວເອງໄດ້ອອກຈາກການຮັບໃຊ້ພຣະເຈົ້າ. ເມັຽຂອງລາວໄດ້ແຍກຈາກລາວເສັຽ, ແລະພວກລູກໆຂອງລາວກໍບໍ່ຕ້ອງການຈະມີສ່ວນອັນໃດໃນການຮັບໃຊ້ພຣະເຈົ້າ. ຟີລິບໄດ້ເຂົ້າສ່ວນດໍາຣົງຊີວິດເຫມືອນຊາວໂລກທົ່ວໆໄປໃນຫລາຍປີທີ່ຜ່ານມາ, ລາວໄດ້ເກີດເຈັບປ່ວຍ, ແລະກໍໄດ້

ເສຍຊີວິດເມື່ອບໍ່ນານມານີ້. ພວກທີ່ໃກ້ຊິດກັບລາວລາຍງານວ່າລາວບໍ່ເຄີຍພົບກັບຄວາມສຸກເລີຍຫລືບໍ່ມີເນື້ອງພໍໃນຄວາມຄິດຂອງລາວທີ່ຢາກຕິດຕາມຄວາມນັ່ງມີແລະອິດທິພົນ.

ໃນບົດຮຽນມື້ນີ້, ພຣະເຈົ້າໄດ້ປະທານການທົດສອບຄວາມເຊື່ອແລະການຍອມຟັງສຳລັບໄພ່ພົນຂອງພຣະອົງ. ຖ້າຫາກວ່າພວກເຂົາຜ່ານການທົດສອບ,ພວກເຂົາກໍຢູ່ໃນທ່າທີລໍຮັບພຣະພອນຈາກພຣະເຈົ້າ. ຖ້າຫາກວ່າພວກເຂົາບໍ່ຜ່ານການທົດສອບ, ພຣະເຈົ້າກໍມີຄວາມອົດທົນດົນນານກັບພວກເຂົາ,ແລະໃຫ້ໂອກາດເຂົາໃຫ້ຮຽນຮູ້, ເຕີບໃຫຍ່ຂຶ້ນ, ແລະພະຍາຍາມອີກໃຫມ່.

<u>**ສຶກສາພຣະຄັມພີ**</u>

1. <u>**ການທົດລອງໃຈຕ່າງໆມີເປົ້າຫມາຍສະເພາະຂອງພຣະເຈົ້າ**</u> (ອພຍ 15:22-26)

ໃນເດືອນພຶສຈິກາ1967, ຂ້າພະເຈົ້າກໍໄດ້ຢູ່ໃນກຸ່ມທຳອິດກັບພວກຊາວອິສຣາເອນທີ່ນຳທ່ອງທ່ຽວເຂົ້າເຂດແຫລມຂອງພູເຂົາຊີນາອີ. ເສັ້ນທາງບົກຂອງພວກເຮົາຈາກແຄມຝັ່ງທະເລຕິດຕາມຮອຍເດີມຂອງໂມເຊແລະພວກຊາວອິສຣາເອນທີ່ເຄີຍໄດ້ໃຊ້ຜ່ານມານັ້ນ. ພະຍຸດິນຊາຍເມື່ອມໍ່ໆມານີ້ໄດ້ຕັນທົບທາງໄວ້ຫລາຍໆບ່ອນ. ມີເຫດການທີ່ແຕກຕ່າງກັນເກີດຂຶ້ນເຖິງ 15 ເທື່ອ, ພວກຜູ້ໂດຍສານຜູ້ຊາຍໄດ້ຖືກເອີ້ນໃຫ້ໄປແກ່ລົດເມອອກຈາກກອງດິນຊາຍໂດຍໃຊ້ເສັ້ນເຊືອກໃຫຍ່ໆດຶງ. ກຳນົດຂອງການເດີນທາງທີ່ໃຊ້ເວລາພຽງແຕ່ 3 ຊົ່ວໂມງກໍກັບກາຍເປັນຫລາຍກວ່າ 13 ຊົ່ວໂມງ. ຂ້າພະເຈົ້າໄດ້ຍິນສຽງຈົ່ມຊູ່ຂອງພວກນັກທ່ອງທ່ຽວເປັນພິເສດແມ່ນພວກຊາວອິສຣາເອນ, ໃນການຢ້ານນ້ຳຫມົດເຖິງແມ່ນວ່າທຸກໆຄົນໄດ້ຮ່າຍນ້ຳເຕັມກະຕິກສຳລັບຕົນແລ້ວກໍຕາມ. ຂ້າພະເຈົ້າສາມາດວາດພາບເຫັນສະພາບຂອງທ່ານໂມເຊທີ່ເພິ່ນຕ້ອງໄດ້ປະເຊີນຜ່ານມາແລ້ວ.

ຫລັງຈາກທີ່ພວກອິສຣາເອນໄດ້ຈາກ**ທະເລແດງ**ມາບໍ່ດົນ, ພວກເຂົາໄດ້ກ້າວເຂົ້າສູ່ຖິ່ນກັນດານ**ຊູຣະ**, ທາງທິດຕາເວັນຕົກສ່ຽງເຫນືອຂອງພູຊີນາອີ. ຄວາມຫມາຍຂອງຊື່ນີ້ແມ່ນ "ຝາກຳແພງ" ແລະບາງທີກໍອາດຈະເລັງເຖິງຝາກຳແພງເມືອງອັນເກົ່າແກ່ທີ່ເສດເຫລືອຢູ່ໃນຂົງເຂດນັ້ນກໍໄດ້. ເມື່ອພວກເຂົາມາຮອດບໍ່ນ້ຳມາຣາ, ທີ່ຫມາຍຄວາມວ່າບໍ່ນ້ຳຂົມ, ພວກເຂົາໄດ້ຕັ້ງຊື່ເຫມາະສົມດີເພາະວ່າເປັນນ້ຳທີ່ຂົມ, ບໍ່ສາມາດທີ່ຈະດື່ມໄດ້. **ປະຊາຊົນໄດ້ຮ້ອງຈົ່ມທຸກຕໍ່ໂມເຊ**, ຜູ້ຊຶ່ງນຳຄຳຈົ່ມນີ້ທູນຫາພຣະຜູ້ເປັນເຈົ້າ.

ໃນທັນໃດນັ້ນ, ໂມເຊໄດ້ເອົາທ່ອນໄມ້**ໂຍນລົງໄປໃນນ້ຳ**ຕາມພຣະເຈົ້າສັ່ງທັນທີ. ຫລັງຈາກນັ້ນນ້ຳກໍກັບກາຍເປັນຫວານສາມາດດື່ມໄດ້. ໂມເຊຈຶ່ງໄດ້ແບ່ງປັນພຣະສັນຍາຂອງພຣະເຈົ້າທີ່ວ່າຖ້າພວກເຂົາຫາກ**ຍອມເຊື່ອຟັງອົງພຣະຜູ້ເປັນເຈົ້າ**ຢ່າງລະມັດລະວັງແລະ**ເຮັດໃນສິ່ງທີ່ຖືກຕ້ອງ**ຕໍ່ພຣະເນດພຣະອົງແລ້ວ, ຫລັງຈາກນັ້ນພຣະອົງຈະບໍ່ລົງໂທດພວກອິສຣາເອນເຫມືອນດັ່ງທີ່ພຣະອົງໄດ້ລົງໂທດພວກເອຢິບນັ້ນ. ແທນທີ່ຈະລົງໂທດຢ່າງຫນັກຕໍ່ໄພ່ພົນຂອງພຣະອົງ, ພຣະເຈົ້າໄດ້ສະແດງຕົນເອງໂດຍເວົ້າວ່າ "**ເຮົານີ້ແຫລະເປັນຜູ້ປິ່ນປົວພວກເຈົ້າໃຫ້ດີ.**" ຫລັງຈາກນັ້ນພຣະເຈົ້າໄດ້ນຳພາໄພ່ພົນຂອງພຣະອົງໄປເຖິງເອລິມບ່ອນທີ່ມີບໍ່ນ້ຳພຸແລະກົກອິນທະພະລຳເພື່ອໄພ່ພົນຂອງພຣະອົງຈະມີຄວາມສຸກສຳຣານ.

ໃນພຣະຄັມພີພາກພຣະສັນຍາໃຫມ່, ຄຳເວົ້າດຽວກັນໃນພາສາກຣີກທີ່ແປວ່າ "ທົດລອງໃຈ" ຫລື "ລໍ້ລວງ." ຕາມກົດເກນຂອງການໃຊ້ທີ່ຖືກຕ້ອງແປວ່າດັ່ງນີ້: ເມື່ອມັນມາຈາກຊາຕານທີ່ມີເປົ້າຫມາຍຈະທຳລາຍພວກເຮົາ, ຄຳເວົ້າທີ່ຖືກຄື "ລໍ້ລວງ." ເມື່ອມັນມາຈາກພຣະເຈົ້າທີ່ມີເປົ້າຫມາຍຢາກສ້າງພວກເຮົາໃຫ້ເຂັ້ມແຂງ, ຄຳແປທີ່ຖືກຄື "ທົດລອງໃຈ." ທ່ານຢາໂກໂບໄດ້ບັນລະຍາຍໃນຈົດຫມາຍຂອງເພິ່ນຢ່າງແຈ່ມແຈ້ງວ່າ "ທົດລອງໃຈ" ແມ່ນເງື່ອນໄຂເຮັດໃຫ້ເກີດຄວາມຊົມຊື່ນຍິນດີຕໍ່ຄຣິສຕຽນ. ການທົດສອບຄວາມເຊື່ອຂອງພວກເຮົາເຮັດໃຫ້ເກີດຄວາມອົດທົນ, ແລະຄວາມອົດທົນເຮັດໃຫ້ເກີດການໃຫຍ່ຂຶ້ນຝ່າຍຈິດວິນຍານ(ຢກບ.1:2-4). ເຖິງແມ່ນວ່າໃນເວລາທີ່ຈົນຕາແຈ, ພວກເຮົາສາມາດຍືນຍັດຢູ່ໄດ້, ໂດຍທີ່ຮູ້ວ່າພຣະເຈົ້າເປັນຜູ້ຮັບຜິດຊອບຢ່າງເຕັມສ່ວນຕໍ່ການຢູ່ດີກິນດີຂອງພວກເຮົາ.

## ໒. <u>ການທົດລອງໃຈເປີດເຜີຍຄວາມຈິງຮັກພັກດີ</u> (ອພຍ. 16:໒-4)

ອີກເທື່ອນຶ່ງ, ໄພ່ພົນຂອງພຣະເຈົ້າໄດ້ຈົ່ມຮ້າຍ. ພວກເຂົາໄດ້ມາເຖິງຖິ່ນກັນດານຊິນ, ຊຶ່ງບົ່ງບອກວ່າໃກ້ຈະເຖິງພູຊີນາອີ(ໂຫເຣັບ), ພູເຂົາຂອງພຣະເຈົ້າ. ໃນຕອນນີ້, ພວກເຂົາໄດ້ເດີນທາງອອກຈາກປະເທດເອຢິບກ້າວເຂົ້າສູ່ເດືອນທີສອງ. ພວກເຂົາບໍ່ມີອາຫານ, ແລະກໍຫລຽວບໍ່ເຫັນໃນທາງອື່ນອີກ. ພວກເຂົາຈົ່ມຮ້າຍໂມເຊແລະອາໂຣນສຳລັບການນຳພາພວກເຂົາເຂົ້າສູ່ຖິ່ນກັນດານເພື່ອໃຫ້ຫມົດທຸກຄົນຕາຍຍ້ອນຄວາມຫິວອາຫານ. ອີກເທື່ອນຶ່ງ, ໂມເຊໄດ້ນຳເອົາຄຳຈົ່ມຂອງພວກເຂົາຫາພຣະຜູ້ເປັນເຈົ້າ. ພຣະເຈົ້າບອກໂມເຊວ່າພຣະອົງຈະໃຫ້ອາຫານ**ຕົກລົງ**ມາຈາກຟ້າຄື**ເຂົ້າຈີ່ຈາກສວັນ**ສຳລັບພວກເຂົາ. ພວກເຂົາຈະ**ຕ້ອງອອກໄປເກັບເອົາໃຫ້ພຽງພໍສຳລັບແຕ່ລະມື້**ເທົ່ານັ້ນ. ໃນມື້ທີຫົກ, ພວກເຂົາຕ້ອງເກັບໃຫ້ໄດ້ສອງເທົ້າເພື່ອໄວ້ສຳລັບວັນສະບາໂຕ.

ໃນ 16:6-30, ໂມເຊແລະອາໂຣນໄດ້ອະທິບາຍຄຳແນະນຳຂອງພຣະເຈົ້າສູ່ພວກອິສຣາເອນ. ພວກເຂົາຈະໄດ້ຮັບຊີ້ນ(ນົກຂຸ້ມ)ໃນຕອນແລງແລະເຂົ້າຈີ່(ມານາ)ໃນຕອນເຊົ້າ. ທຸກສິ່ງທີ່ເຂົາໄດ້ເກັບໄວ້ເຫລືອສຳລັບມື້ນັ້ນມັນກໍຈະບູດເຫມັ່ນເສັຽ. ພວກເຂົາຈະຕ້ອງຮຽນຮູ້ທີ່ຈະເພິ່ງພາອາສັຍອົງພຣະຜູ້ເປັນເຈົ້າສຳລັບພຣະພອນຂອງພຣະອົງໃນແຕ່ລະມື້. ພວກອິສຣາເອນຫລາຍຄົນບໍ່ຜ່ານການທົດສອບຄວາມເຊື່ອໃນແຕ່ລະມື້, ດັ່ງທີ່ບໍ່ຜ່ານໃນດ້ານອື່ນໆອີກ. ພຣະເຈົ້າມີຄວາມອົດທົນກັບພວກເຂົາ, ແລະໃນການທົດສອບແຕ່ລະອັນພຣະອົງພະຍາຍາມໃຫ້ເຂົາເຮັດໃຫ້ດີທີ່ສຸດ. ພຣະເຈົ້າທົດສອບພວກຄຣິສຕຽນແລະແມ້ກະທັ້ງຄຣິສຕະຈັກໃນສມັຍນີ້ກໍເພາະເຫດຜົນດຽວກັນນີ້.

ໃນສອງສາມປີຜ່ານມານີ້, ຂ້າພະເຈົ້າໄດ້ເວົ້າກັບເພື່ອນຄົນນຶ່ງທີ່ເປັນຜູ້ນຶ່ງໃນການຮັບຜິດຊອບເຣື່ອງເງິນໃນໂບດຂອງລາວ. ລາວໄດ້ກ່າວເຖິງເງິນຈຳນວນຫລາຍທີ່ທາງໂບດໄດ້ສະສົມໄວ້. ຂ້າພະເຈົ້າໄດ້ຖາມເຖິງເປົ້າຫມາຍຂອງເງິນທີ່ທ້ອນໄວ້ນັ້ນ. ລາວບອກວ່າທາງໂບດໄດ້ຕົກລົງກັນເປັນເອກກະສັນວ່າຕ້ອງແຍກເງິນຈຳນວນນຶ່ງໄວ້ເພື່ອວ່າຫາກພຣະເຈົ້າບໍ່ອວຍພອນທາງດ້ານການເງິນແລ້ວການຖວາຍນຶ່ງສ່ວນສິບກໍຈະຢຸດບໍ່ເຂົ້າມາອີກ. ຂ້າພະເຈົ້າໄດ້ແບ່ງປັນຄວາມຂຸ້ນເຄືອງໃຈຕໍ່ເພື່ອນຄົນນັ້ນວ່າມັນເປັນອັນຕະລາຍທີ່ເຮັດຢ່າງນີ້ຕໍ່ໂບດ. ຄຣິສຕະຈັກທັງຫລາຍຈະຂ້ອນຂ້າງຮຸ່ງເຮືອງຂຶ້ນຖ້າຫາກພວກເຂົາເພິ່ງອາສັຍພຣະເຈົ້າກວ່າທີ່ພວກເຂົາຈະຄິດວ່າເຂົາຢູ່ໄດ້ໂດຍປາສຈາກພຣະພອນຂອງພຣະອົງ.

ຄືກັນກັບໂບດຂອງເພື່ອນຂ້າພະເຈົ້າ, ຄຣິສຕຽນຫລາຍຄົນປາກົດວ່າມີຄວາມຮູ້ສຶກວ່າທີ່ພວກເຂົາສາມາດຢູ່ໄດ້ໂດຍປາສຈາກການມີຄວາມເພິ່ງອາສັຍຕໍ່ພຣະເຈົ້າ. ພວກເຮົາຖືກສິດສອນຈາກພໍ່ແມ່ໃຫ້ເພິ່ງໃນຕົນເອງ. ອາຈານໂປໂລໄດ້ຫນູນໃຈຄຣິສຕະຈັກໃນເມືອງເທຊະໂລນິກວ່າ "ເຮັດວຽກດ້ວຍມືເຂົາເອງ" ແລະ "ບໍ່ຕ້ອງອາສັຍຄົນອື່ນ" (1 ທຊລນ 4:11-1໒). ຍັງມີບາງຄັ້ງຄາວທີ່ພວກເຮົາມີຄວາມຮູ້ສຶກວ່າບໍ່ຕ້ອງເພິ່ງອາສັຍພຣະເຈົ້າຄືກັນ, ແຕ່ວ່ານີ້ບໍ່ແມ່ນຄຳສິດສອນຂອງອາຈານໂປໂລ. ການເພິ່ງອາສັຍຕົວພວກເຮົາເອງແທນທີ່ຈະເພິ່ງອາສັຍພຣະເຈົ້າກໍແມ່ນອັນນຶ່ງຂອງການທົດສອບຄວາມເຊື່ອຫລາຍໆດ້ານຊຶ່ງພວກເຮົາເອງກໍບໍ່ຜ່ານການພິສູດໃນບາງຄັ້ງຄາວ. ພຣະເຈົ້າກໍອົດທົນກັບພວກເຮົາແລະອະນຸຍາດໃຫ້ພວກເຮົາໄດ້ຮຽນຮູ້ຈາກຄວາມຜິດພາດນັ້ນ ຖ້າພວກເຮົາຫາກຮັບຊາບໃນຄວາມພາດພັ້ງເຫລົ່ານັ້ນ. ອັຄສາວົກໂຢຮັນກ່າວຕໍ່ພວກທີ່ເຊື່ອວ່າ "ຖ້າພວກເຮົາທັງຫລາຍສາຣະພາບຜິດບາບຂອງພວກເຮົາ, ພຣະອົງຊົງສັດຊື່ແລະທ່ຽງທັມຈະຊົງໂຜດຍົກບາບຂອງພວກເຮົາແລະຈະຊົງໂຜດຊຳຣະລ້າງເຮົາທັງຫລາຍຈາກການອະທັມຫມົດສິ້ນ" (1 ຢຮ 1:9). ໃນບາງຄັ້ງຄາວ, ຄຣິສຕຽນທຸກໆຄົນຕ້ອງທຳ "ຄວາມສະອາດຝ່າຍຈິດວິນຍານ" ທີ່ທ່ານໂຢຮັນໄດ້ຂຽນໄວ້ນີ້, ຫລັງຈາກນັ້ນກໍພະຍາຍາມອີກເທື່ອນຶ່ງ. ພຣະເຈົ້າຈະນຳສິ່ງທີ່ດີທີ່ສຸດອອກມາຖ້າພວກເຮົາຫາກມີຄວາມອົດທົນດົນນານ. ພວກທີ່ເຊື່ອໃນສມັຍນີ້ຕ້ອງສືບຕໍ່ໃນຄວາມຖ່ອມໃຈ, ຮຽນຮູ້ຈາກຕົວຢ່າງຂອງຊາວອິສຣາເອນແລະມີການສຳນຶກວ່າພວກເຮົາກໍບໍ່ຜ່ານການພິສູດເຊັ່ນກັນ. ພວກທີ່ເຊື່ອເປັນທີ່ພໍພຣະທັຍພຣະຜູ້ເປັນເຈົ້າເມື່ອເວລາທີ່ພວກເຂົາພະຍາຍາມຕອບຮັບຕໍ່ທຸກໆສະຖານະການໃຫ້ເປັນໂອກາດທີ່ຈະໃຫຍ່ຂຶ້ນໃນຄວາມເຊື່ອແລະໃນການເຊື່ອຟັງ.

## 3. <u>ການທົດລອງໃຈເຮັດໃຫ້ເຫັນການປະທານໃຫ້ຂອງພຣະເຈົ້າ</u> (ອພຍ 16:31-35)

ຊາວອິສຣາເອນບໍ່ໄດ້ສຳນຶກເຖິງການປະທານອາຫານຂອງພຣະຜູ້ເປັນເຈົ້າໃຫ້ໃນແຕ່ລະເຊົ້າ. ພວກເຂົາພຽງ

ແຕ່ເອີ່ຍເຖິງຄຳວ່າ**ມານາ,** ທີ່ມີຄວາມຫມາຍວ່າ "ມັນແມ່ນຫຍັງ?" ມັນເປັນເມັດຂາວໆເຫມືອນໃນຜັກຊີ, ມີຣົດເຫມືອນເຂົ້າຫນົມແຜ່ນປະສົມນ້ຳເຜີ້ງ. ໂມເຊໄດ້ນຳຄຳແນະນຳຂອງພຣະເຈົ້າໃຫ້ຜອງເອົາມານາສອງກິໂລຮັກສາໄວ້ເພື່ອລຸ້ນພາຍຫນ້າຈະສາມາດເຫັນການຊົງປະທານໃຫ້ຂອງພຣະເຈົ້າສຳລັບໄພ່ພົນຂອງພຣະອົງ. ຕໍ່ຈາກນັ້ນມາ, ມານາກໍຖືກບັນຈຸໄວ້ໃນໄຫຄຳເພື່ອເກັບໄວ້ໃນຫີບແຫ່ງພຣະສັນຍາ (ເຮັບເຣີ 9:4). ມານາແມ່ນການຊົງປະທານໃຫ້ຂອງພຣະເຈົ້າ, ທີ່ໄດ້ເຮັດໃຫ້ໄພ່ພົນຂອງພຣະອົງຢູ່ລອດລະຫວ່າງສີ່ສິບປີຢູ່ໃນຖິ່ນກັນດານນັ້ນ. **ຖິ່ນກັນດານ**ໄດ້ຖືກກ່າວໄວ້ໃນຂໍ້ພຣະຄັມພີຫລາຍໆບ່ອນຊຶ່ງບອກເຖິງການທົດລອງໃຈແລະການປະທານໃຫ້ຂອງພຣະເຈົ້າສຳລັບໄພ່ພົນຂອງພຣະອົງ (ເອຊາຢາ 40:3-5; ໂຮເຊອາ 2:14-15; ມັດທາຍ 4:1; ພຣະນິມິດ 12:6). ຄວາມເຊື່ອຂອງພວກທີ່ເຊື່ອສາມາດເຂັ້ມແຂງຂຶ້ນໄດ້ໃນຂນະຢູ່ໃນການທົດສອບນັ້ນໂດຍການທົບທວນຄືນແລະການສະທ້ອນກັບຄືນເບິ່ງການທີ່ພຣະເຈົ້າໄດ້ຊົງໂຜດປະທານໃຫ້ຜ່ານຜ່າຕໍ່ສະຖານະການຕ່າງໆນັ້ນ.

ພຣະເຈົ້າຍັງສືບຕໍ່ເຮັດໃຫ້ຄວາມຕ້ອງການຂອງພວກເຮົາຄົບເຕັມຢູ່ຕລອດໃນຫລາຍໆທາງຈົນນັບບໍ່ຖ້ວນ. ຂ້າພະເຈົ້າໄດ້ເຫັນການຊົງປະທານໃຫ້ຂອງພຣະອົງຕໍ່ພວກນັກຮຽນດ້ານການເງິນໃຫ້ໄດ້ສືບຕໍ່ຮ່ຳຮຽນ ແລະມີສ່ວນໃນການເດີນທາງໄປເຮັດວຽກງານຮັບໃຊ້ພຣະອົງ. ຂ້າພະເຈົ້າໄດ້ເຫັນພຣະອົງປະທານສັນຕິສຸກ, ຄວາມອົບອຸ່ນ, ແລະການປິ່ນປົວໃຫ້ຄົນທີ່ເປັນໂຣກມະເຮັງໃຫ້ຫາຍດີແລະຕລອດເຖິງພວກທີ່ມີໂຣກຮ້າຍແຮງອື່ນໆອີກດ້ວຍ. ບາງເທື່ອກໍໄດ້ເຫັນການກ້າວເຂົ້າມາຊ່ອຍຂອງພຣະອົງໂດຍກົງໂລດ, ແຕ່ວ່າໃນຫລາຍຄັ້ງພຣະອົງເຮັດໃຫ້ຄວາມຕ້ອງການຕ່າງໆຄົບເຕັມໂດຍຜ່ານການກະທຳທີ່ເຊື່ອຟັງຂອງໄພ່ພົນຂອງພຣະອົງ.

ໂທຣສັບມືຖືຂອງຂ້າພະເຈົ້າດັງເທື່ອນຶ່ງຫລືສອງເທື່ອໃນແຕ່ລະມື້ຈາກບາງຄົນທີ່ມີຄວາມຕ້ອງການໃນອີກສົ້ນນຶ່ງຂອງສາຍ. ບາງທີ່ກໍມີຄອບຄົວທີ່ຂາດທີ່ຢູ່ອາສັຍ. ບາງທີ່ກໍແມ່ນແມ່ທີ່ມີລູກເຖິງຫົກຄົນໃນຄົວເຮືອນທີ່ຂາດອາຫານ. ບາງທີກໍແມ່ນຄອບຄົວທີ່ຕ້ອງການນ້ຳ, ໄຟຟ້າ, ຫລືແກັສສຳລັບເຮືອນເຂົາເຈົ້າ. ໃນນາມສິດຍາພິບານ-ຜູ້ນຳພາໃນວິຫານຜູ້ລ້ຽງແກະທີ່ດີ, ການຮັບໃຊ້ມວນຊົນໃນຄຸ້ມຂອງໂບດຂ້າພະເຈົ້າເຂດເມືອງຊໍນີ, ຣັດໂອກະລາໂຮມາ, ຂ້າພະເຈົ້າສາມາດຕອບສນອງຕໍ່ຄວາມຕ້ອງການເຫລົ່ານັ້ນໄດ້ໂດຍການສນັບສນູນດ້ານການເງິນຈາກສະມາຊິກທີ່ມີຄວາມເຊື່ອຟັງພຣະເຈົ້າໃນໂບດຂອງພວກເຮົາ. ເມື່ອພວກທີ່ມີຄວາມຕ້ອງການເຫລົ່ານີ້ໄດ້ຮັບໃນສິ່ງທີ່ເຂົາຕ້ອງການແລ້ວກໍກ່າວຂອບໃຈຂ້າພະເຈົ້າ, ມັນເປັນຄວາມຊົມຊື່ນຍິນດີຫລາຍທີ່ສາມາດບອກພວກເຂົາໃຫ້ຂອບຄຸນພຣະເຈົ້າແທນທີ່ຈະຂອບໃຈຂ້າພະເຈົ້າ, ເພາະວ່າພຣະອົງເປັນຜູ້ປະທານຄວາມຊ່ອຍເຫລືອທີ່ແທ້ຈິງ.

ພຣະເຈົ້າຍັງສືບຕໍ່ປະທານການທົດສອບຄວາມເຊື່ອແລະຄວາມເຊື່ອຟັງສຳລັບໄພ່ພົນຂອງພຣະອົງຢູ່, ການທີ່ພຣະອົງກະທຳເຊັ່ນນີ້ກໍເພື່ອຈະນຳສິ່ງທີ່ດີທີ່ສຸດຂອງພວກເຮົາອອກມາ. ເມື່ອທ່ານຫາກປະເຊີນກັບການທົດສອບເຫລົ່ານັ້ນ, ໃຫ້ທ່ານຈຳໄວ້ສເມີວ່າ:

- ການທົດສອບມີເປົ້າຫມາຍສະເພາະຂອງພຣະເຈົ້າ.
- ການທົດສອບເປີດເຜີຍຄວາມຈົງຮັກພັກດີທີ່ແທ້ຈິງຂອງພວກເຮົາຕໍ່ພຣະເຈົ້າ.
- ການທົດສອບສະແດງໃຫ້ເຫັນເຖິງການທີ່ພຣະເຈົ້າຊົງເປັນຜູ້ປະທານສິ່ງທີ່ຕ້ອງການໃຫ້ພວກເຮົາ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org translated by PA.